# ແປງຕົນເປັນຄົນໃໝ່ ແປງກົດເກນໃໝ່ ແປງການເມືອງໃໝ່ ສັງຄົມໃໝ່ແລະຊີວິດໃໝ່ ວ່າດ້ວຍການເຄື່ອນໄຫວຂອງສັງຄົມລາວ ໃຫ້ພົ້ນຈາກກັງວົນວິກິດ ເຂົ້າສູ່ນິຕິແຫ່ງອະນາຄົດອັນຮຸ່ງແຈ້ງແລະດີງາມ

ວິທີການໄດທີ່ສາມາດນຳໄປສູ່ການປຽ່ນແປງ ກຸ່ມຜູ້ໄຊ້ອຳນາດບໍຣິຫານປະເທດ ຈາກກຸ່ມຄົນທີ່ຊອກສແວງຫາປະໂຍດເພື່ອຕົນເອງຫຼືກຸ່ມຕົນເອງ ທີ່ເປັນກຸ່ມຄົນຜູ້ຖືເອົາຜົນປະໂຍດຂອງປະຊາຊົນຊາວລາວ ນີ້ກໍ່ຄືຄົນສວ່ນໃຫ່ຽໃນສັງຄົມລາວເປັນທີ່ຕັ້ງ ບໍ່ວ່າຈະມາຈາກຝ່າຍໄດ ເຊັ່ນ ຊ້າຍຫຼືຂວາ ກາງຫຼື ເປນລາວ ລ້າຫລັງລວ້ນແຕ່ວ່າຖືກຕອ້ງດີທັງນັ້ນ ( ຂໍໃຫ້ທຸກພັກທຸກນາມທີ່ມີອຸດົມການຮວ່ມກັນການເຄື່ອນປະເທດລາວໃຫ້ພົ້ນຈາກວິກິດ ໃຫ້ປະຊາຊົນຊາວລາວມີຊີວິດໃໝ່ ຈົ່ງມາຮວ່ມຕົວກັນເຂົ້າເຮັດໃນສິ່ງທີ່ຖືກຕອ້ງແລະດີງາມ ໂດຍບໍ່ແບ່ງແຍກວ່າເປັນຊ້າຍເປັນຂວາເປັນກາງຫຼືເປນລາວຮັກຊາດລ້າຫລັງ( ປະເທດລາວໄດ້ຍ່າງມາເຖິງຈຸດປຽ່ນທາງປະວັດສາດຄັ້ງສຳຄັນແລ້ວ ເມື່ອຂບວນການລາວອິສຣະສວ່ນປະຊາຊົນໄດ້ດັງດັງຂື້ນແລະສແດງຕົນເປັນເຈົ້າພາບຕົວຈິງ ໃນການເຄື່ອນໄຫວສັງຄົມຄົນລາວ ໃຫ້ພົ້ນຈາກຊວ້ງວິກິດແລະສ້າງປະເທດລາວໃໝ່ ຕາມເຈດຈຳນົງຂອງປວງຊົນຊາວລາວຕໍ່ໄປ (ໃນວັນນີ້ ໃນສະພາບທີ່ພວກເຮົາໆແລະພວກທ່ານໆກຳລັງປະສົບຢູ່ທັງທາງຕົງແລະທາງອອ້ມຕ່າງຕະໜັກຊັດແລ້ວວ່າຊີວິດຄົນລາວ ກຳລັງຕົກຢູ່ໃນຊວ່ງວິກິດອະນາຄົດມືດມົນແມ່ນບໍ່ໄຊ້ຄົນລາວທັງເບີດ ແຕ່ກໍ່ເປັນຄົນລາວສວ່ນໃຫ່ຽ ທີ່ດຳເນີນຊີວິດຢູ່ໃນກອບກຳໜົດຂອງການໄຊ້ອຳນາດການເມືອງ ຜເດັດການຄອມມິນິສເຈົ້າໜ້າທີ່ຂ້າຣາຊການຊຶ່ງຄືກຸ່ມຜູ້ມີອຳນາດບາດໃຫ່ຽ ໃນບໍຣິເວັນສັງຄົມໂລກຍຸກໂລກາພິວັດ ສວ່ນຄົນລາວທີ່ຢູ່ເໜືອອຳນາດຫຼືສັງກັດ ເກາະຢືນອີງເອບຢູ່ໃນກຸ່ມຂອງຜູ້ໄຊ້ອຳນາດ ຊຶ່ງເປັນຄົນກຸ່ມນອ້ຍອາດບໍ່ຮູ້ຮອ້ນຮູ້ໜາວກັບວິກິດ ບໍ່ຕະໜັກເຖິງຄວາມຕີບຕັນຂອງຄົນສວ່ນໃຫ່ຽ ເພາະພວກເຂົາດຳເນີນຊີວິດຢູ່ເທິງຖານຂອງຄວາມໄດ້ປຽບໃນແທບທຸກດ້ານ ມີອະພິຊິດຮອບດ້ານກະທັ້ງໃນບາງກໍຣະນີ ທີ່ສຸດ ກົດໝາຽເອື້ອມເຖິງພຽງແຕ່ວ່າພວກເຂົາ ໃນທີ່ສຸດກໍ່ໜີບໍ່ພົ້ນຈາກກົດແຫ່ງກັມນັ້ນ (ຈື່ງເປັນເຫດຜົນສຳຄັນວ່າ ເມື່ອໄດທີ່ກຸ່ມຄົນສວ່ນໃຫ່ຽເດືອດຣອ້ນ ຕົກຢູ່ໃນຊວ້ງວິກິດຄົນສວ່ນນອ້ຍກໍ່ໄຊ້ວ່າ ຈະລອຍຕົວຢູ່ເໜືອວິກິດນັ້ນໄດ້ ເພາະເຖິງທີ່ສຸດແລ້ວ

ເມື່ອເບິ່ງເລິກເຖິງທຸກວິກິດຂອງຄົນສ່ວນໃຫ່ຽແລ້ວລ້ວນມີເຫດມາຈາກການກະທຳ ຂອງກຸ່ມຄົນສ່ວນນ້ອຍນັ້ນເອງ-ມັນເປັນຄວາມສຳພັນຂອງສອງດ້ານສອງທາງໃນ ລັກສະນະທີ່ເປັນຄູ່ຂັດແຍ່ງກັນ ທີ່ຕ່າງເປັນເຫດປັດຈັຍຫຼືເງື່ອນໄຂຂອງວິກິດທີ່ດຳ ຣົງຢູ່ໃນສັງຄົມລາວ-ອີກໃນນຶ່ງມັນເປັນ(ຂີ່ໂຮ່)ຂັມ-ເກມ ຖ້າຝ່າຍນຶ່ງໄດ້ ອີກຝ່າຍ ນຶ່ງກໍ່ຕ້ອງເສັຽ ຜູ້ໃຊ້ອຳນາດໄດ້ ຜູ້ຖືກໃຊ້ອຳນາດກໍ່ເສັຽ ບໍ່ໃຊ້ ຊະນະ ໆ ເກມ ( ຊະນະ ເກມ ຄືອັນໃດ)ຊະນະເກມກໍ່ຄື ການໃຊ້ອຳນາດຂອງຜູ້ໃຊ້ອຳນາດ ເປັນໄປ ໃນລັກສະນະທີ່ຍັງປະໂຍດ ແກ່ຜູ້ຖືກໃຊ້ອຳນາດເປັນຫລັກຄະນະຜູ້ໃຊ້ອຳນາດມຸ້ງໃຊ້ ອຳນາດເພື່ອຜົນປະໂຍດຂອງປະຊາຊົນສ່ວນໃຫ່ຽ ທຸກຢ່າງທີ່ທຳໄປລ້ວນເສີມສ້າງ ຄຸນນະພາບຊີວິດຂອງຄົນສ່ວນໃຫ່ຽໃນສັງຄົມ ຜູ້ໃຊ້ອຳນາດໄດ້ ຕ້ອງໃຊ້ຄວາມຮູ້ ຄວາມສາມາດໄດ້ ແລະສ້າງຄວາມຈະເຣີນຮຸ່ງເຮືອງໃນດ້ານຕ່າງ ໆໃຫ້ແກ່ສັງຄົມ ໄດ້-ແລະສ້າງໂອກາດໃຫ້ແກ່ປະຊາຊົນສ່ວນໃຫ່ຽ ໃຫ້ເກີດຄວາມປອງດອງສມານ ສາມະຄີ ປະຊາຊົນສ່ວນໃຫ່ຽໄດ້ຮັບການປະຕິບັດຢ່າງເປັນທັມ ແລະເທົ່າທຽມກັນ ຖ້ວນໜ້າ ຄະນະທີ່ຜູ້ຖືກໃຊ້ອຳນາດກໍ່ໄດ້ ສິ່ງຕ່າງ ໆ ພື້ນຖານຂອງກັນໄດ້ຂອງຜູ້ ໃຊ້ອຳນາດນັ້ນເອງ-(**ອີກອັນນຶ່ງ**-ຜູ້ໃຊ້ອຳນາດກັບຜູ້ຖືກໃຊ້ອຳນາດຕ່າງໄດ້ພື້ນ ຖານດຽວກັນ ປະກອບເຂົ້າເປັນຄົນລະດ້ານທີ່ບໍ່ໃຊ້ຄູ່ຂັດແຍ້ງຫຼື-ຄູ່ກັດແຍ້ງຊິ່ງກັນ ແລະກັນ-ແຕ່ເປັນຄົນລະດ້ານທີ່ເສີມສ້າງຄວາມເປັນເອກພາບອັນດຽວກັນ ( ຊະນະ-ເກມ ຈິ່ງເປັນທາງອອກທີ່ຖືກຕ້ອງພຽງນຶ່ງດຽວໃນການພາປະເທດຊາດ ກ້າວພົ້ນຈາກວິກິດ ເປີດຫລັກໃໝ່ໃຫ້ແກ່ການສ້າງຊີວິດໃໝ່ໃຫ້ແກ່ປະຊາຊົນລາວ **(ດັ່ງນັ້ນ ໃນວັນນີ້**)ການເຄື່ອນໄຫວທາງການເມືອງຂອງປະເທດລາວ ໃຫ້ພົ້ນຈາກ ບໍຣິສັດຂອງ)ງຂີ້ໂຮ່)ຂັມ ເກມ-ໄປສູ່ບໍຣິສັດຂອງ-ຊະນະ-ເກມ ຊຶ່ງກໍ່ຄືປຽ່ນກຸ່ມຜູ້ໃຊ້ ອຳນາດບໍຣິຫານປະເທດ ຈາກຕົວແທນຜົນປະໂຍດຂອງຄົນກຸ່ມນ້ອຍ ມາເປັນຕົວ ແທນຜົນປະໂຍດຂອງປະຊາຊົນສ່ວນໃຫ່ຽ ຈຶ່ງເປັນຄວາມຈຳເປັນເຣັ່ງດ່ວນທີ່ສຸດ ແລະເປັນພາຣະກິດອັນສຳຄັນສູງສຸດຮ່ວມກັນ ຂອງປວງຊົນຊາວລາວ

**ວິກິດຣະດັບໂຄງສ້າງ**

ປະວັດສາດ ການໃຊ້ອຳນາດບໍຣິຫານປະເທດ ກຸ່ມຜູ້ໃຊ້ອຳນາດທາງການເມືອງຂອງ

ປະເທດລາວ ໂດຍສະເພາະເລີ້ມຕັ້ງແຕ່ປີ-1960-ປະເທດກ້າວເຂົ້າສູ່ຍຸກການເມືອງ ໃນຣະບອບລາຊາທິປະໄຕ ອັນມີພຣະມະຫາກະສັດຊົງເປັນປະມຸກ ມີກຸ່ມຜູ້ໄຊ້ອຳນາດ ບໍຣິຫານປະເທດຜັນປຽ່ນໝູນວຽນ ເຂົ້າມາທຳໜ້າທີ່ກັນຫລາຽໜ້າຫລາຽຕາໃນຫຼັກໆ ກໍ່ຄືກຸ່ມທະຫານ-ກຸ່ມລາຊາອຳນາດແລະກຸ່ມຜເດັດການ ແຕ່ທຸກກຸ່ມກໍ່ເລີຍວ່າໄດ້ລວັນ ແຕ່ມຸ້ງໝ້າໄຊ້ອຳນາດສນອງຄວາມຕອ້ງການຂອງຕົນເອງ ບໍ່ທາງໃດກໍ່ທາງນຶ່ງ ດຶງ ທວງຜົນປະໂຍດເສີມສ້າງຖານອຳນາດກຸ່ມຕົນເອງ ການອັນໃດທີ່ຈະທຳໃຫ້ປະຊາຊົນ ເຂັ້ມແຂງເພິ່ງພາຕົນເອງໄດ້ກໍ່ບໍ່ທຳ-ແລະປອ່ຍໃຫ້ພວກເຂົາເຈົ້າກຽດຊັງຈົ່ນກາຽຂື້ນ ເປັນວັນທຸກ ໆມື ຈົ່ນເກີດພາວະໃຜດີໃຜຢູ່ ມືໃຜຍາວສາວໄດ້ສາວເອົາ ໂດຍຝາ່ຍຣັຖ ຫຼືກຸ່ມຜູ້ໄຊ້ອຳນາດທຳເປັນເດັກເປັນທອງບໍ່ຣູ້ຣອັນຣູ້ໝາວພາກັນເອົາຫູໄປນາເອົາຕາ ໄປໄຮ່ ເພາະມົວສາຣະວົນຢູ່ແຕ່ກັບເຣື້ອງຂອງການເສາະຫາຊອກທາງທັກທວັງຜົນ ປະໂຍດເຂົາຕົວເອງ-(**ຜົນກໍ່ຄື**)ປະຊາຊົນສວ່ນໃຫ່ຽຄະນະທີ່ກຸ່ມຄົນສວ່ນນອ້ຍຈະປັກ ຕົວຢູ່ໃນມຸມຂອງຕົນ ເກີດການແບ່ງແຍກຢາ່ງຊັດເຈນໃນສັງຄົມລາວ ເກີດຄວາມ ແບ່ງແຍກຕໍ່ກັນຣະຫວ່າງຄົນລາວດວ້ຍກັນ ທັງທາງດ້ານການດຳເນີນຊີວິດແລະອາ ຣົມຄວາມຣູ້ສຶກຄາ່ນິຍົມ-ຈຶ່ງເກີດຄວາມບໍ່ເຂົ້າໃຈກັນບໍ່ຕະໜັກໃນຄວາມຕອ້ງການ ຂອງແຕ່ຣະຝາ່ຍ ເມື່ອເກີດມີບັນຫາກະທົບຕໍ່ຊີວິດກໍ່ໜີບໍ່ພົ້ນ ທີ່ຈະບານປາຍໄປເປັນ ວິກິດນອ້ຍໃຫ່ຽບໍ່ຂື້ນສຸດ ແລ້ວກາ່ວຫາວາ່ໂທດຊຶ່ງກັນແລະກັນວິຈານກັນແຕ່ມັກ ຈະລົງເອີ່ຍດວ້ຍການກະທົບກະທັ້ງກັນ ໄດ້ມີການໄຊ້ຄວາມຣຸນແຮງເຂົ້າໃສ່ກັນ ທັງ ໄຊ້ກຳລັງອາວຸດເຂັ່ນຂ້າຊຶ່ງກັນແລະກັນໄດ້ເປັນເວລາ-30-ກວ່າປີທີ່ຜາ່ນມາຜູ້ທີ່ຕົກ ເປັນເປົ້າຂອງການໄຊ້ກຳລັງເຂັ່ນຂ້າ ສວ່ນໃຫ່ຽກໍ່ຄືປະຊາຊົນ-(ຜົນຕາມມາ)ກໍ່ຄື ບັນຫາບໍ່ໄດ້ຮັບການແກ້ໄຂໃຫ້ຕົກໄປຢາ່ງແທ້ຈິງ ຄະນະທີ່ບາດແຜຈາກການປາບ ປາມເຂັ່ນຂ້າປະຊາຊົນໄດ້ກາຍເປັນ-ແຜໃຈ-ທີ່ຍາກຈະລົບເລືອນໄດ້

-(**ການຂັບເຄື່ອນ**ຂອງປະວັດສາດຊາດລາວໃນຫວ່ງ-30-ກວາ່ປີທີ່ຜາ່ນມາ ຈຶ່ງ ເປັນຂບວນການສັງຄົມຂອງວິກິດແຫ່ງຊາດ ເປັນຜົນຈາກໂຄງສ້າງທາງການເມືອງ ໂດຍຕົງ ເນື່ອງຈາກຣະບົບການເມືອງວາ່ການເລືອກຕັ້ງໃນຣະບອບປະຊາ ທິປະໄຕ ເປີດປອ່ງໃຫ້ຜູ້ມີຄວາມທະເຍີທະຍານ

ຈອ້ງສແວງຫາຜົນປະໂຍດໃສ່ຕົນ ສາມາດກາ້ວຂຶ້ນມາຢູ່ໃນຖານະຜູ້ໄຊ້ອຳນາດ ຜເດັດບໍຣິຫານປະເທດ ແລ້ວກອບໂກຍກິນຢາ່ງສນັດໂດຍບໍ່ຕອ້ງຖືກຕວດສອບຫຼື ລົງໂທດເທ້ຈ-**(ເວົ້າໄປ**ເຮັດບໍ່ໄດ້ໃນຄວາມເປັນຈິງ ເວທີການເມືອງຂອງປະເທດ ລາວ ກໍ່ຄືເວທີເສຣີຂອງຜເດັດການທີ່ເວົ້າວາ່ເປີດກວ້າງ ໃຫ້ກຸ່ມຜົນປະໂຍດຕາ່ງ ໆ ໃນສັງຄົມລາວເຂົາໄປແຍ່ງຍຶດອຳນາດການບໍຣິຫານປະເທດ ທັງໃນຮູບແບບຜເດັດ ການທະຫານຄອມມີນີສແລະຜເດັດການພັກຣັຖ ເມື່ອໃດທີ່ກຸ່ມໃດກຸ່ມນຶ່ງໄດ້ຮັບໄຊ ຊະນະມານັ້ນ ທັງດວ້ຍວິທີການເຮັດຣັຖປະຫານ(ໄຊ້ປາຍປືນອາກາ)ຫຼືດວ້ຍການໄຊ້ ອຳນາດທາງການເມືອງຂົ່ມຂູ່ປະຊາຊົນ -ໃນການເລືອກຕັ້ງຊຶ່ງກໍ່ຄືໄຊ້ອຳນາດປາຍ ປືນອາກາ-ຕໍ່ມາພວກເຂົາກໍ່ຕັ້ງໜາ້ຕັ້ງຕາກອບໂກຍຜົນປະໂຍດເຂົ້າຕົວເອງ ພອ້ມ ກັບວາງເສັ້ນວາງສາຍນາບຂູ່ປະຊາຊົນ ເຊັ່ນບໍ່ຈາ່ຍຄາ່ແຮງງານໃຫ້ຂາຣາຊການ ແລະເຈົ້າໜາ້ທີ່ຕາ່ງ ໆແລ້ວມາເສີມສາ້ງອຳນາດທາງການເມືອງຂອງພວກຕົນໃວ້ ຢາ່ງໜຽວແໜ້ນ ໝູນວຽນປ່ຽນໄປເພື່ອໃຫ້ປະຊາຊົນຢາ້ນກວ່າ ຈົ່ນກາຍເປັນປະ ວັດຜເດັດການຂາຍຊາດອັນບໍ່ມີວັນຈົບຊີ້ນ -(ພຶດຕິກັມສາ້ງສົມຂອງກຸ່ມຜູ້ໄຊ້ອຳນາດ ບໍຣິຫານປະເທດເຫລົ່ານີ້

-ໄດ້ກະຕຸ້ນໃຫ້ຄົນລາວຈຳນວນຫລາຽຂື້ນເຣື້ອຍໆ-ຕື່ນຕົວ -ຕະໜັກເຖິງຫາຽຍະນະ ທີ່ຈະເກີດຂື້ນກັບປະເທດຊາດແລະກັບຄົນລາວໂດຍຣວມ ເມື່ອມີໂອກາດກໍ່ຈະຮວມ ຕົວກັນນຳສເນີວິທີການປ່ຽນແປງແກ້ໄຂ ປະຕິຮູບຣະບອບການໄຊ້ອຳນາດບໍຣິຫານ ປະເທດຂອງກຸ່ມຜົນປະໂຍດຕາ່ງ ໆ ແຕ່ກໍ່ລົ້ມເຫລວໂດຍຕຣອດ ໃນທີ່ສຸດຈຶ່ງມີການ ສເນີແນວທາງການໄຊ້ອຳນາດບໍຣິຫານປະເທດ ພາຍໄຕ້ການກຳກັບໂດຍຕົງຂອງ ຂບວນການ -ການເມືອງລາວອິສຣະສວ່ນປະຊາຊົນ

ເອີ້ນກັນຍໍ້ໆ ວາ່ປະຊາຊົນເປັນເຈົ້າຂອງປະເທດ

## ເສັ້ນທາງການປ່ຽນແປງປະວັດສາດ

ໃນວັນນີ້ ທີ່ຂບວນການລາວອິສຣະເພື່ອປະຊາທິປະໄຕ ຈັດກຸ່ມໃຫ່ຽຢູ່ປະເທດ ແລະຢູ່ຕາ່ງປະເທດ ປະກາດເຮັດສົງຄາມຄັ້ງສຸດທາ້ຍ ກັບຣະບອບຄອມມີ ນີສເກາວເໜືອໄດ້ເຜີຍນະໂຍບາຍຂອງການ ຈະເຮັດການພິກປະວັດສາດ

ດ້ວຍກຳລັງປະຊາຊົນຢ່າງຊັດເຈນ ໂດຍມຸ້ງໝັ້ນທີ່ຈະຕໍ່ສູ້ທຸກຮູບແບບໃນກອບຂອງກົດໝາຍ ຂອງໂລກເສຣີປະຊາທິປະໄຕແລະດ້ວຍສັນຕິວິທີ-ຕ້ອງປຸກປະຊາຊົນທົ່ວປະເທດໃຫ້ຕື່ນຂຶ້ນດ້ວຍແສງໄຟປັນຍາ ແລ້ວສ້າງອຳນາດໃໝ່ອັນຍິ່ງໃຫ່ຍຂຶ້ນມາເພື່ອຖອນຮາກຖອນໂຄນການເມືອງຣະບອບລາຊາແບບເກົ່າແລະຣະບອບຜເດັດການຄອມມິນິສ-ທີ່ກຸ່ມຜເດັດການອຳນາດຄອບງັມຜູກຂາດໃຫ້ເບີດໄປຈາກປະເທດລາວ ແລ້ວມາສະຖາປະນາການເມືອງແບບໃໝ່ທີ່ປະຊາຊົນເປັນເຈົ້າຂອງປະເທດຂຶ້ນແທນຣະບອບຜເດັດການ ແລ້ວເປີດທາງໃຫ້ຂບວນການປະຊາທິປະໄຕ ຂອງປະຊາຊົນດຳເນີນໄປໃນກອບຂອງຣະບອບປະຊາທິປະໄຕ ອັນມີຊາດ ສາສນາ ພຣະກະສັດແລະປະຊາຊົນໄດ້ຢ່າງເປັນທັມ

ຫາກເຮັດໄດ້ສຳເຣັດ ການເມືອງຂອງປະເທດລາວກໍ່ຈະກ້າວພົ້ນຈາກ ວົງຈອນອຸບາດທີ່ນັກການເມືອງຍາດອຳນາດຈາກປະຊາຊົນໄປໄຊ້ ເປັນຣະບອບຜເດັດການຂ້າຄົນໃນຊາດ-ປະຊາຊົນຕ້ອງພັທນາການຂອງຣະບອບປະຊາທິປະໄຕອັນມີຊາດສາສນາແລະປະຊາຊົນເປັນຫລັກຂອງຊາດ ກໍ່ຈະດຳເນີນໄປຢ່າງເປັນຜົນປະວັດໃຫ້ເກີດກະບວນການຖັກທໍ່ຕໍ່ເຊື້ອມໄປໃນທຸກໆ ດ້ານແລ້ວເສີມເພີ້ມຄວາມສົມບູນຂຶ້ນໃນຕົວເອງຍິ່ງຂຶ້ນເຣື້ອຍໆ ເມື່ອນັ້ນການເມືອງລາວກໍ່ຈະເຂັ້ມແຂງ ມີຊີວິດຊີວາສາມາດສນອງຕອບຄວາມຕ້ອງການ ຂອງປະຊາຊົນລາວໄດ້ຢ່າງແທ້ຈິງ ມີຄວາມເປັນປະຊາທິປະໄຕທີຄົນລາວສ່ວນໃຫ່ຍເພິ່ງພໍໃຈທີ່ສຸດເປັນໄປໄດ້ຫລາຍກວ່າ(ໃນ) ວັນນີ້ ຂບວນການ ການເມືອງສ່ວນປະຊາຊົນນຳໂດຍຂບວນການລາວອິສຣະເພື່ອປະຊາທິປະໄຕ ມີຄວາມພ້ອມທີ່ຈະປະຕິບັດພາຣະກິດທາງປະວັດສາດໃຫ່ຍກວ່າຄັ້ງໃດໆ ໃນການລົ້ມເລີກຣະບອບປະຊາທິປະໄຕຕົວແທນ ທີ່ກຸ່ມຜເດັດການຄອບງຳຜູກຂາດ ມາເປັນຣະບອບປະຊາທິປະໄຕທີ່ປະຊາຊົນມີສ່ວນຮ່ວມ ອັນເປັນການເມືອງພາກປະຊາຊົນຈະກັບ ຈາກການເມືອງເພື່ອຜົນປະໂຍດຂອງຄົນກຸ່ມນອ້ຍ ເປັນການເມືອງເພື່ອຜົນປະໂຍດຂອງປະຊາຊົນສ່ວນໃຫ່ຍຈາກການເມືອງທີ່ສໍ້ສົນສົກປົກ ອັນໜ້າລັງກຽດ ເອົາການເມືອງທີ່ປົ່ງໃສສະອາດ ໜ້າເລື້ອມໃສໃນກອບຂອງຣະບອບປະຊາທິປະໄຕອັນມີຊາດສາສນາພຣະມະຫາກະສັດແລະປະຊາຊົນເປັນຫລັກ

ໂອກາດທີ່ເຮັດສຳເຣັດມີສູງຫລາຽ ເພາະພວກເຂົາເຈົ້າກຳລັງເຮັດໃນສິ່ງທີ່ຄົນລາວສ່ວນໃຫ່ຽຕອ້ງການແລະສອດຄອ້ງຢ່າງຍິ່ງ ກັບກະບວນການພັທນາທາງການເມືອງຂອງປະເທດກຳລັງພັທນາກ້າວໜ້າ ໃນຍ່ານເອເຊັຽແປຊີຟິກທີ່ເນັ້ນການຮັບໄຊ້ປະຊາຊົນກຸ່ມຜູ້ໄຊ້ອຳນາດບໍຣິຫານປະເທດ ຄືເອົາຜົນປະໂຍດຂອງປະຊາຊົນເປັນຕົວຕັ້ງບໍ່ທາງໃດກໍ່ທາງນຶ່ງ -(ຈົ່ນເຖິງວັນນີ້ ຂບວນການ ການເມືອງສວ່ນປະຊາຊົນທີ່ນຳໂດຍຂບວນການລາວອິສຣະເພື່ອປະຊາທິປະໄຕ ໄດ້ຂຍາຍຕົວຢ່າງຮວດເຮັວໄປທົ່ວປະເທດແລະທົ່ວໂລກຈູດໄຟລາມທົ່ງ ບໍ່ວ່າການພົວພັນພາຍໃນຂບວນການລາວອິສຣະເກົ່າໃນປະເທດແລະຕ່າງປະເທດ ຈະລົງເອີ່ຍໄປຮູບໃດຂບວນການ ການເມືອງສວ່ນປະຊາຊົນຈະຕອ້ງພັທນາຂຍາຍຕົວຕໍ່ໄປແລະຕອ້ງດຳເນີນການຕໍ່ສູ້ ຈົ່ນກະທັ້ງສາມາດສະຖາປານາຣະບອບການເມືອງທີ່ປະຊາຊົນເປັນເຈົ້າຂອງປະເທດ ໄດ້ໃນທີ່ສຸດ -(ອີກອັນນຶ່ງ ການເມືອງໃນຣະບອບປະຊາທິປະໄຕ ອັນມີຊາດສາສນາພຣະມະຫາກະສັດແລະປະຊາຊົນເປັນເຈົ້າຂອງປະເທດ ຈະໄດ້ຮັບການຍົກຍອ້ງຂຶ້ນສູ່ຄວາມເປັນການເມືອງ ທີ່ຍັງປະໂຍດສູງສຸດແກ່ປວງປະຊາຊົນຊາວລາວຢ່າງແທ້ຈິງແລະສອດຄອ່ງຢ່າງຍິ່ງ ກັບສະພາບອັນເປັນຈິງຂອງປະເທດລາວ

**ວິທີຄິດໃໝ່**

ຂບວນການລາວອິສຣະ ກ່າວວ່າ-ມະນຸດຊາດຈະຢູ່ຣອດຕອ້ງມີວິທີຄິດໃໝ່ໂດຍສິ່ນເຊີງໃນຍຸກປະຈຸບັນໂລກວິກິດຫຼາຽດາ້ນ ມະນຸດຊາດຍັງແກ້ໄຂບໍ່ໄດ້ເພາະຍັງບໍ່ມີວິທີໃໝ່ໂດຍສິ່ນເຊີງເມື່ອເຖິງວາຣະສຸດທາ້ຍຍັງແກ້ວິກິດບໍ່ໄດ້ ມະນຸດຊາດກໍ່ຈະບໍ່ຣອດໂລກຈະຕອ້ງພິນາດ ຕາມພຸດທະທຳນາຍລວ່ງໜາ້ເປັນເວລາ-2,550-ປີຜ່ານມາແລ້ວ -(ໃນຍຸກປັດຈຸບັນປະເທດລາວກໍ່ວິກິດຫລາຽດາ້ນ ຄົນລາວຍັງແກ້ໄຂບໍ່ໄດ້ແມ່ນແຕ່ວິກິດດຽວ ເພາະຍັງບໍ່ມີວິກິດໃໝ່ໂດຍສິ່ນເຊີງ ເມື່ອເຖິງວາຣະສຸດທາ້ຍຍັງແກ້ວິກິດບໍ່ໄດ້ຄົນລາວກໍ່ຈະບໍ່ຣອດ ປະເທດລາວຈະຕອ້ງພິນາດ ຕາມພຸດທະທຳນາຍເຊັ່ນດຽວກັນ -(ໃນຣະນະນີ້ປະເທດລາວມີວິກິດສຳຄັນ ທີ່ກຳລັງປະເຊີນໜາ້ຢູ່ຄື ວິກິດຣະບອບຜເດັດການຄອມມິນິສ ທີ່ພະຍາຍາມຂາຍຊາດຂາຍຊັພຍາກອນທຸກແຫ່ງໃຫ້ຕ່າງຊາດ

ຄົນລາວຍັງເຜົ່າໄຂບໍ່ໄດ້ ເພາະຍັງບໍ່ມີວິກິດໃໝ່ໂດຍສິ່ນເຊີງ

**ວິທີກິດໃໝ່** ໂດຍສິ່ນເຊີງທີ່ຈະແກ້ວິກິດຣະບອບຄອມມິນິສໄດ້ ຄື ພຸດທະປັນຍາຊື່ງໝາຽຖື່ງ ປັນຍາເຫັນແຈ້ງຂອງພຣະພຸດທະອົງ ທີ່ຕຣັສຮູ້ **ອະຣິຍະສັດ-4-ຄວາມຈິງປະເສີດ-4-ປະການ** ທີ່ສາມາດດັບທຸກໃຫ້ແກ່ມະນຸດໄດ້ມີພຸດທະພົດຕັດວ່າ-ຖ້າບໍ່ມີ-**ພຸດທະປັນຍາ**ແລະບໍ່ໄດ້ສຶກສາຣະບຽບວິນັຍ ຄົນທັງຫລາຽກໍ່ຈະດຳເນີນຊີວິດດັ່ງຄວາຍໃນກາງປ່າ-(ສະນັ້ນຄົນລາວຈື່ງຕອ້ງແກ້ວິກິດຣະບອບຜເດັດການຄອມມິນິສຕາມຫລັກຄຳສອນຂອງພຣະພຸດທະອົງໃນອະຣິຍະສັດ-4-ດັ່ງຕໍ່ໄປນີ້- ຄຳວ່າ-**ວິກິດ**ແປລວ່າ ບັນຫາຂັ້ນອັນຕຣາຍ ແລະຄຳວ່າ-**ບັນຫາ**-ຄື-ທຸກ-**ທຸກຂອງສັງຄົມລາວຂະນະນີ້**- ຄືວິກິດຣະບອບເຜວລາວຄອມມິນິສ-(**ສມຸທັຍ**-ເຫດເກີດແຫ່ງທຸກນີ້-ຄືຕັນຫາຄວາມທະເຍີທະຍານຂອງຣະບອບຜເດັດການເຜວລາວຄອມມິນິສຢ່າງດຽວ-ພຣະພຸດທະອົງຊີ້ບອກທາງໄວ້ວ່າ ຕອ້ງຣັບທີ່ຕົ້ນເຫດແຫ່ງທຸກ ຄື ຕັນຫາ-ຄວາມທະເຍີທະຍານຢາກ-(ແລ້ວຈະປະຕິບັດຕາມທາງທີ່ພຣະພຸດທະອົງຊີ້ບອກໄດ້ຢ່າງໄດ ຖ້າຄົນລາວມີພຸດທະປັນຍາ-ວິທີກິດໃໝ່ໂດຍສິ່ນເຊີງ-ຈະຕອ້ງໄຊ້ປັນຍາພິຈາຣະນາຢ່າງໂຍນິໂສມະນະສີ່ປະການ-ດັ່ງຕໍ່ໄປນີ້-(1)ທຳໃຫ້-**ຕັນຫາ**-ຄວາມທະເຍີທະຍານຢາກ-ແລະກິເລດ(ໂລພະ-ໂທສະ ໂມຫະ)ຂອງຣະບອບເຜວລາວຄອມມິນິສ ແຕ່ຫ່າງກາຍຍັງມີຊີວິດຢູ່-ວິທີນີ້ຈະຕອ້ງທຳເອງໂດຍມີພຣະອໍຣະຫັນທີ່ມີອະພິນຍາ-6ມາສະແດງກິດທຳໃຫ້ເຜວລາວຄອມມິນິສຢຸດການເຄື່ອນໄຫວທີ່ເປັນອະກຸສົນແລະຍິນຍອມມາຟັງທັມຈົ່ນບັນຣຸທັມໄດ້ ດັ່ງເຊັ່ນພຣະພຸດທະອົງທຳກັບ **ອົງຄຸລີມານ** ແຕ່ຍຸກນີ້ບໍ່ສາມາດນິມົນພຣະອໍຣະຫັນຈາກບອ່ນໄດໄດ້ ສະນັ້ນວິທີນີ້ຈື່ງເຮັດບໍ່ໄດ້ (2)ເຮັດໃຫ້ຜເດັດການເຜວລາວຄອມມິນິສຕາຍ ເພາະທັງຕັນຫາແລະກິເລດຈະຕາມຣ່າງກາຍໄປດວ້ຍ ຕຣອດຈົນການເຄື່ອນໄຫວທຳລາຍຊັພຍາກອນຂອງຊາດ

**ປະຊາຊົນລາວທຸກ-ເຫດແຫ່ງທຸກ**

ເຫດແຫ່ງທຸກຂອງປະຊາຊົນເປັນຣະຍະເວລານານມາຖືງ-30-ກວ່າປີ ຈົ່ນມາເຖີງປັດຈຸບັນມັນເກີດຈາກການບໍຣິຫານຂອງຣັຖບານ ບໍ່ມີຄຸນນະພາບນັບຕັ້ງແຕ່ປະກາດໄຊ້ສານປະຊາຊົນມາໃນປີ-1975-ຣັຖບານພັກເຜວລາວຄອມມິນິສ

ຣັຖບານຂອງຄນະປະຕິວັດປະຫານປະຊາຊົນຣວມທັງຣັຖບານຄອມມິນິສວຽດ ນາມເໜືອໃນປະຈຸບັນນີ້ລວ້ນແຕ່ໄຊ້ການບໍຣິຫານທີ່ບໍ່ມີຄຸນນະພາບທັງຊິ້ນເມື່ອໄຊ້ອໍານາດຖານສາກົນເປັນຕົວຊີ້ວັດ ເນື່ອງຈາກບໍ່ມີຣະບົບຮອງຮັບການບໍຣິຫານທີ່ບໍ່ມີຄຸນນະພາບເພາະຂາດຣະບົບເຣັດ ໃຫ້ມີໂອກາດຜິດແລະການບົກຜ່ອງສູງເຖິງ 85% ຫາ້-95% ຕາມຜົນການວິໃຈທີ່ອົງການມາດຕະຖານສາກົນ ໃຫ້ການຍອມຮັບການບໍຣິຫານທີ່ບໍ່ມີຄຸນນະພາບລາ້ສມັຍ ຂອງຣັຖບານຊຸດຕ່າງ ໆທີ່ຜ່ານມາ ມີເປົ້າໝາຽໜາ້ທີ່ກອບ ໂກຍໄຊ້ອໍານາດການງານມາຕຣອດ -ບໍ່ມີເປົ້າໝາຽທີ່ຄວາມເພິ່ງພໍໃຈຂອງປະຊາຊົນ ຕາມການບໍຣິຫານທີ່ມີຄຸນນະພາບ

ການບໍຣິຫານທີ່ບໍ່ມີຄຸນນະພາບຂອງຣັຖບານ ຈຶ່ງສວນທາງກັບຄວາມຕອ້ງການຂອງປະຊາຊົນແລະມາສາ້ງຄວາມທຸກໃຫ້ປະຊາຊົນ ເຊັ່ນ ການບໍ່ຈາຍຄາ່ແຮງງານໃຫ້ຂາ້ຣາຊການທຸກປະເພດແລະໄຊ້ການອໍານາດຜເດັດການ ເພື່ອປະໂຍດສວ່ນຕົນການອອກກົດໝາຽຂາຍຊາດໃນປີ-1975-ມານັ້ນ ຣັຖບານພັກເພວລາວຣັກຊາດຄອມມິນິສເພາວເໜືອມີການກົງຊາດຂາຍຊາດແລະທຸຈະຣິດເລືອກຕັ້ງຂອງຣັຖບານພັກເພວລາວຣັກຊາດ ການບໍຣິຫານບໍ່ມີຄຸນນະພາບຂອງຣັຖບານ ມີໂອກາດຜິດບົກຜ່ອງສູງເກືອບເຖິງ-100% ສາ້ງບັນຫາທາງການເມືອງແລະການທຸຈະຣິດເລືອກຕັ້ງຢາ່ງຊໍ້າຊາກ ເພາະຂາດຣະບົບປອ້ງກັນ

## ກົດໝາຽການປົກຄອງ ແລະ ຣັຖທັມມະນູນ

ກົດໝາຽ ແລະ ຣັຖທັມມະນູນ ເຣັດຂຶ້ນເພື່ອໃຫ້ເປັນພື້ນຖານສໍາຄັນໃນການປະຕິຣູບການເມືອງ ເພື່ອໃຫ້ການບໍຣິຫານຂອງຣັຖບານມີຣະບົບ ໂດຍກໍາໜົດໃນໝວດນະໂຍບາຍພື້ນຖານແຫ່ງຣັຖ ຕອ້ງບັນຍັດໃຫ້ຈັດຣະບົບງານ ຣາຊການແລະງານຂອງຣັຖຢາ່ງອື່ນ ໃຫ້ມີປະສິດທິພາບທີ່ສອດຄອ້ງກັບບົດບັນຍັດ ຂອງມາດຕະຖານສາກົນທີ່ກໍາໜົດໃຫ້ ຣະບົບເປັນຫລັກປະກັນຄຸນນະພາບການບໍຣິຫານ(un)ສນັບສນູນອົງກອນມາດຕະຖານສາກົນ ໂດຍຮຽກຮອ້ງໃຫ້ປະເທດສະມາຊິກອົງການສະຫະປະຊາຊາດ ປະຕິຣູບການເມືອງແລະອົງການສະຫະປະຊາຊາດ ປະຕິຣູບການເມືອງໂດຍຈັດຣະບົບທີ່ມີສິດທິພາບ ຮັບຮອງການບໍຣິຫານຂອງຣັຖບານການເມືອງໃໝ່

## ຣະບົບການປົກຄອງໃໝ່ໄຂໃຫ້ແຈ້ງຂອງລາວອິສຣະ

ການບໍຣິຫານຣັຖບານລາວຈະມີຄຸນນະພາບໄດ້ຕາມຂໍ້ກົດໝາຽຂອງມາດ
ຕາ ສາກົນຄືການຈັດຣະບົບການງານຣາຊການ ໃຫ້ມີປະສິດທິພາບຕາມກົດ
ໝາຽ ມີຣະບົບສແດງວິທີປະຕິບັດແລະຊັບພະຍາກອນທີ່ໄຊ້ໃຫ້ການ
ບໍຣິຫານມີຄຸນນະພາບມີດັ່ງນີ້

1-**ໂຄງສ້າງອົງການທີ່ທັນສມັຍ**-ໝາຽເຖິງໂຄງສ້າງອົງການທີ່ເປັນຣະບົບເປັນທີມ

2-**ຣະບົບສແດງວິທີປະຕິບັດ**-ໄດ້ແກ່ຣະບົບສແດງວິທີປະຕິບັດງານເຊັ່ນ ຣະບຽບ
ວິທີປະຕິບັດງານ ຫຼື ຄູ່ມືເປັນຕົ້ນ

3-**ຊັບພະຍາກອນ**-ໄຊ້ຄົນ ເງິນ ວັສດຸ ເໝືອນເດີມ ແຕ່ວິທີການບໍຣິຫານໄດ້ປຽ່ນໄປ
ໄຊ້ການວາງແຜນ ການປະຕິບັດ ການຕຣວດສອບແລະປັບປຸງ ຈຸດເດັ່ນຢູ່ທີ່ມີຣະ
ບົບຣອງຮັບການວາງແຜນແລະການປະຕິບັດ ໂດຍໄຊ້ຣະບົບດັ່ງກ່ວເປັນເຄື່ອງມື
ຕຣວດສອບແລະໄຊ້ຣະບົບເປັນພື້ນຖານ ໃນການປັບປຸງແລະຊວ່ຍສ້າງປະວັດຕະ
ກັມໃໝ່ ໆ ຊວ່ຍໃຫ້ມີການປັບປຸງຢ່າງຕໍ່ເນື່ອງ ທີ່ຍີ່ປຸ່ນໄຊ້ວິທີນີ້ຈຶ່ງມີຂີດຄວາມສາ
ມາດແຂ່ງຂັນເອົາສະນະສະຫະຣັຖໄດ້ໃນທົສວັດ-1980-ເປັນເຄື່ອງມືໃນການປຽ່ນ
ທີ່ດີຫລາຽແລະເປັນເຄື່ອງມືທີ່ງ່າຍທີ່ສຸດ ໃນການປະຕິຮູບການເມືອງໃຫ້ການບໍຣິ
ຫານຂອງຣັຖບານມີຄຸນນະພາບ

4-**ສາຍເຫດຣັຖທັມນູນບໍ່ມີຄຸນນະພາບ** ມີດັ່ງນີ້ ສາຍເຫດເກີດຈາກການໄຊ້ຄົນບໍ່
ສອດຄອ້ງກັບປະເພດການງານ ຣັຖທັມນູນເປັນກົດໝາຽກ່ຽວກັບການບໍຣິຫານປະ
ເທດ ຈຳເປັນຕອ້ງໄຊ້ນັກບໍຣິຫານທີ່ທັນສມັຍ ເທົ່າທັນການປຽ່ນແປງຂອງໂລກທຳ
ໜ້າທີ່ຣາ່ງຣັຖທັມນູນ ແຕ່ຣັຖທັມນູນລາວໄຊ້ນັກກົດໝາຽມະຫາຊົນ ທີ່ຂາດຄວາມ
ຮູ້ເຮື້ອງການບໍຣິຫານທີ່ທັນສມັຍ ເຫັນໄດ້ທີ່ຄນະກັມມາທິການຍົກຮ່າງກົດໝາຽການ
ປົກຄອງໃນປີ-1975-ມາ ທີ່ບໍ່ສາມາດສ້າງຄວາມຊັດເຈນເຮື້ອງຣະບົບທີ່ປະສິດທິ
ພາບ ໃຫ້ເປັນພື້ນຖານສຳຄັນໃນການປະຕິຮູບການເມືອງ ເປັນຜົນສ້າງຄວາມລົ້ມ
ເຫລວໃນການປະຕິຮູບການເມືອງສາຍເຫດຂອງຄວາມສັບສົນວຸ້ນວາຍທາງການ
ເມືອງຢ່າງຕໍ່ເນື່ອງທັງໃນປັດຈຸບັນແລະອະນາຄົດເພາະຂາດຣະບົບປອ້ງກັນ

## ວິທີດັບທຸກ

ທຸກຍອ່ມຣະງັບໄດ້ທີ່ເຫດແຫ່ງທຸກ ເຫດແຫ່ງທຸກຄື ກົດໝາຍການປົກຄອງແລະຣັຖທັມນູນບໍ່ມີຄຸນນະພາບ ທຳໃຫ້ປະເທດລາວບໍ່ມີການປົກຄອງໃນຣະບອບປະຊາທິປະໄຕ ເພາະຂາດຣະບົບປອ້ງກັນໄຊ້ອຳນາດຫຼືການຊື້ສຽງ ການຣະງັບທຸກທີ່ຕົ້ນເຫດເຣັດໄດ້ໂດຍການປະຕິບັດຫຼືປະຕິຮູບການເມືອງໃຫ້ກົດໝາຍຫຼືຣັຖທັມນູນ ມີຄຸນນະພາບຍິ່ງຂຶ້ນແຕ່ທະຫານເຣັດການປະຕິວັດດວ້ຍອຳນາດການເມືອງແຕ່ປີ-1975 ເຖິງປັດຈຸບັນ ບໍ່ມີປະໂຍດໃດໆ ເພາະບໍ່ສາມາດປັບປຸງຣະບົບສາ້ງປະຊາທິປະໄຕໄດ້ ວິທີດັບທຸກໄດ້ແຕ່ການປະຕິວັດທາງການເມືອງຫຼືປະຕິຮູບການເມືອງໃໝ່ ໂດຍສັນຕິຂອງພາກສວ່ນປະຊາຊົນ ໂດຍການສາ້ງຣັຖທັມນູນໃໝ່ແລະກົດໝາຍໃໝ່ໃຫ້ມີຣະບົບມີຄຸນນະພາບຕາມມາດຕະຖານສາກົນ ເຣັດໃຫ້ປະເທດລາວມີການບໍຣິຫານທີ່ມີຄຸນນະພາບສາ້ງການປົກຄອງຣະບອບປະຊາທິປະໄຕ ອັນມີກະສັດຊົງເປັນປະມຸກຢາ່ງແທ້ຈິງແລະໃຫ້ປະຊາຊົນມີສິດເທົ້າທຽມກັນໃນຣະບອບປະຊາທິປະໄຕ

## ນັກການເມືອງລາວ-ເຊື່ອໄດ້ຫຼືບໍ່ ວາ່

ຄົນລາວທຸກຄົນທີ່ຢູ່ໃນເມືອງລາວ ຍອ່ມໄດ້ຮັບຂາ່ວສານທັງທາງຕົງແລະທາງອອ້ມກຽ່ວກັບເຣື້ອງການເມືອງໃນນິຕິມຸມມອງຕາ່ງ ໆມາເປັນຣະຍະໆ ແລະຖາ້ຄິດຈະຢູ່ເມືອງລາວໄປຕຣອດຊີວິດ ກໍ່ຄົງຈະບໍ່ພົ້ນທີ່ຈະຕອ້ງກຽ່ວຂອ້ງກັບການເມືອງ ຕັ້ງແຕ່ຣະດັບນອ້ຍໄປເຖິງຣະດັບໃຫ່ຽຂອງປະເທດຊາດບາ້ນເມືອງ-(ຫລາຽຄັ້ງຫລາຽຄາວໄດ້ມີຄວາມຮູ້ສຶກວາ່ ເປັນຫຍັງຣະບົບການເມືອງບາ້ນເຮົາບໍ່ຢຸດບໍ່ມາດຕະຖານເມື່ອໃດຈະມີນັກການເມືອງອາຊີບທີ່ອາສາເຂົ້າມາເຣັດງານເພື່ອປະເທດຊາດຢາ່ງຈິງໃຈ ບໍ່ມີຜົນປະໂຍດອັນໃດແອບແຝງຢູ່ທັງຕໍ່ໜາ້ແລະລັບຫລັງ ເທົ່າທີ່ໄດ້ເວົ້າຄຸຍກັບຜູ້ຮູ້ທັງຫລາຽ ຕາ່ງກໍ່ຕອບກັນວາ່ກອ່ນຈະຕາຍໄປຈະຕອ້ງໄດ້ເຫັນການເມືອງທີ່ດີທີ່ມີຄຸນນະພາບ ເຂົາໄດ້ທຳໜາ້ທີ່ເພື່ອປະຊາຊົນຢາ່ງແທ້ຈິງ-(ຂາ້ພະເຈົ້າໄດ້ພະຍາຍາມນຶກແລະຝັນວາ່ ຈັກມີວັນນຶ່ງເມືອງລາວຄົງຈະມີນັກການເມືອງ ທີ່ໃສ່ສະອາດຂາວຜອ່ງ ມາທຳໜາ້ທີ່ເປັນຕົວແທນຂອງຊາວບາ້ນ ເຂົ້າໄປໃນສະພາເປັນປາກເປັນສຽງຂອງປະຊາຊົນທີ່ແທ້ຈິງ

ແລະສິ່ງທີ່ຢາກເຫັນກໍ່ຄືເມື່ອມີການຕຣວດສອບຊັບສິນແຕ່ກ່ອນແລະຫລັງເຮັດ ໜ້າທີ່ນັກການເມືອງກໍ່ຄືບໍ່ຮ່າງມີ ບໍ່ມີຊັບສິນເພີ້ມຂື້ນຊຸນິດທີ່ວ່າຫາເຫດຜົນມາ ອະທິບາຍບໍ່ໄດ້-(ຫລັກການຂອງຊາວພຸດ ພຣະພຸດທະເຈົ້າທ່ານໄດ້ໃຫ້ຫລັກ ການໄວ້ວ່າ ຖ້າເຮົາຈະເບິ່ງແລະເຊື່ອວ່ານັກການເມືອງຄົນນັ້ນແລະພັກນັ້ນ ເປັນຈັ່ງໃດໃຫ້ພິຈາຣະນາດ້ວຍຕົນເອງ

## ການເມືອງໃໝ່ຂອງຂບວນການລາວອິສຣະ ໃນຣະບອບ ປະຊາທິປະໄຕ-ປະເທດລາວຕອ້ງກ້າວເຖິງຈຸດປ່ຽນແປງ

ການເມືອງໃໝ່ ໃນຣະບອບປະຊາທິປະໄຕອັນຊົງມີພຣະມະຫາກະສັດ ເປັນປະມຸກ ແລະໃຫ້ປະຊາຊົນມີສິດທິເສຣີພາບ ມີດັ່ງນີ້

1-ໃນການເມືອງໃໝ່ນີ້ໄດ້ແກ່ ຜູ້ຍຶດຖືຄຸນນະທັມຄວາມດີ ເປັນນັກຄິດນັກເຮັດ ທີ່ເສັຽສະລະເພື່ອສວ່ນຣວມ ຊາດສາສນາພຣະມະຫາກະສັດລາວທຸກໆພຣະອົງ ອັນດຳຣົງໃນຣະບອບປະຊາທິປະໄຕ ທີ່ມີທັມນຳໜ້າ

2-ໃນການເມືອງໃໝ່ນີ້ ເປັນທີ່ຣວບລວມນັກເລືອກຕັ້ງທີ່ເປັນຕົວແທນປະຊາຊົນ ຢ່າງແທ້ຈິງ ບໍ່ອ້າງວ່າມາຈາກປະຊາຊົນຢ່າງຫລວງຫລາຽ ແຕ່ເປັນຕົວແທນປະ ຊາຊົນຕົວແທ້ສຽງແທ້ ທີ່ປຣາສຈາກປະວັດຊົ່ວທຸຈຣິດທຸກທາງ ເພື່ອເຮັດງານ ໄດ້ຢ່າງປຣາສຈາກອຸປະສັກໃດໆ ທັງປວງ

3-ໃນການເມືອງໃໝ່ນີ້ ເປັນທີ່ຣວບລວມຜູ້ທີ່ເສັຽສະລະຄວາມສຸກສວ່ນຕົວ ເພື່ອ ຄົນລາວທັງຊາດ ມີຄວາມກ້າຫານຢ່າງນັກຣົບໄຊ້ທັມນຳໜ້າ ໃນການບໍຣິຫານ ບ້ານເມືອງຢ່າງແທ້ຈິງ

4-ໃນການເມືອງໃໝ່ນີ້ ນັກເລືອກຕັ້ງທີ່ເປັນຕົວແທນປະຊາຊົນ ຕອ້ງປຣາສຈາກ ເອົາພົນປະໂຍດສວ່ນຕົວ ຫ້າມມີສວ່ນລວມຫຼືຜົນປະໂຍດຊັບຊອ້ນທຸກຮູບແບບ ໃນການໄຊ້ງົບປະມານຂອງຣັຖຢ່າງເດັດຂາດ

5-ໃນການເມືອງໃໝ່ນີ້ ຕອ້ງມີພາກປະຊາຊົນມີສວ່ນຮວ່ມ ໃນການອອກກົດໝາຽ ໃນການຕຣວດສອບຣັຖບານໄດ້ເຕັມ 100% ຕຣວດສອບຣັຖສະພາເຕັມ 100% ຕຣວດສອບນັກເລືອກຕັ້ງທີ່ເປັນຕົວແທນປະຊາຊົນໄດ້ເຕັມ 100%

6 -ໃນການເມືອງໃໝ່ນີ້ ຕ້ອງມີອົງການຕຸລາການ ອົງການອິສຣະທຸກສາຂາ ການເມືອງທີ່ເຂັ້ມແຂງ ອົງການປະຊາຊົນພາກທີ່ເຂັ້ມແຂງແລະປະຊາຊົນ ສາມາດຕຣວດສອບໄດ້ຕາມຣັຖທັມນູນ

7 -ໃນການເມືອງໃໝ່ນີ້ ຕ້ອງປັບທວງຄຸນອຳນາດຂອງຝ່າຍບໍຣິຫານ ທັງຂ້າຣາຊການໄອຍະການ ຂ້າຣາຊການທະຫານ ຕຳຣວດ ໃຫ້ເປັນທີ່ເພິ່ງຂອງປະຊາຊົນ ຕ້ອງສາມາດນຳນັກການເມືອງ ຂ້າຣາຊການຜູ້ມີອິດທິພົນຄົນຊົ່ວ ນັກທຸຣະກິດການເມືອງທີ່ກົງຊາດກິນເມືອງ ທີ່ຈົງໃຈເອບແຝງຊອ້ນເຣັ້ນ ເຮັດຜິດກົດໝາຍເຂົ້າສູ່ກະບວນການສານຍຸຕິທັມ ເພື່ອລົງໂທດຕາມກົດໝາຍຊັ້ນສູງສຸດ ຢ່າງຈິງຈັງ ເພື່ອໃຫ້ເຂັດຫລາບຈື່ຈຳເປັນແບບຢ່າງແກ່ຄົນຊົ່ວທີ່ເຄີຍມີມາແລ້ວ

ດັ່ງນັ້ນພວກເຮົາຕ້ອງເຂົ້າມາຮ່ວມແຮງຮ່ວມໃຈກັນເພື່ອສ້າງການເມືອງ ການປົກຄອງໃໝ່ ຂອງຂບວນການລາວອິສຣະ ໃນຣະບອບປະຊາທິປະໄຕ ອັນເປັນທັມ ເພື່ອນຳພາປະຊາຊົນໄປສູ່ຄວາມສງົບສຸກ ຢ່າງເປັນທັມ ແລະນຳພາປະເທດຊາດເຂົ້າໄປສູ່ຄວາມ ຈະເຣີນກ້າວໜ້າຕໍ່ສັງຄົມ ປະຊາທິປະໄຕອັນແທ້ຈິງ

**ຈາກສູນກາງ ສັນພູໝອກ**
**ທີ່ ນະຄອນວຽງຈັນ**

**ໃນນາມ ລາວອິສຣະ**